ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ
ຫ້ອງການ

ເລກທີ 58 /ກງ.ຫກ
ນະຄອນຫລວງວຽງຈັນ, ວັນທີ 12 JAN 2015

# ແຈ້ງການ

ຮຽນ :
- ທ່ານຫົວໜ້າ ຫ້ອງການກະຊວງ, ອົງການທຽບເທົ່າ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງສັງຄົມ ;
- ທ່ານຫົວໜ້າ ຫ້ອງວ່າການປົກຄອງແຂວງ, ນະຄອນຫລວງ ແລະ ຫ້ອງວ່າການປົກຄອງເມືອງ ;
- ທ່ານຜູ້ອຳນວຍການ ວິສາຫະກິດສ່ວນບຸກຄົນ, ນິຕິບຸກຄົນ ທີ່ເປັນນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ, ໃນຂອບເຂດທົ່ວປະເທດ.

ເລື່ອງ : ການນຳໃຊ້ໃບຢັ້ງຢືນການມອບພັນທະອາກອນ ( ໃຊ້ແທນໃບທະບຽນອາກອນ ).

- ອີງຕາມ ກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບເລກທີ 05/ສພຊ, ລົງວັນທີ 20 ທັນວາ 2011;
- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ກົດໝາຍວ່າດ້ວຍການບັນຊີ ສະບັບເລກທີ 47/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 02/ສພຊ, ລົງວັນທີ 08 ກໍລະກົດ 2009;
- ອີງຕາມ ບົດແນະນຳຂອງກະຊວງການເງິນ ສະບັບເລກທີ 3281/ກງ, ລົງວັນທີ 06 ຕຸລາ 2014 ວ່າດ້ວຍການຄຸ້ມຄອງເກັບລາຍຮັບສ່ວຍສາອາກອນ.

ຫ້ອງການກະຊວງການເງິນ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບ ກ່ຽວກັບ ການນຳໃຊ້ໃບຢັ້ງຢືນການຊຳລະພັນທະອາກອນ ແທນໃບທະບຽນອາກອນ, ເພື່ອຈັດຕັ້ງປະຕິບັດ ການບໍລິການຄຸ້ມຄອງຕາມກົນໄກຜ່ານປະຕູດຽວ, ຂະແໜງສ່ວຍສາອາກອນ ໄດ້ອີງໃສ່ ໃບທະບຽນສຳປະທານ ແລະ ໃບທະບຽນວິສາຫະກິດ ເພື່ອຕິດຕາມເກັບພັນທະອາກອນໃນແຕ່ລະປີ ໂດຍບໍ່ຕ້ອງອອກໃບທະບຽນອາກອນ ແຕ່ຂະແໜງສ່ວຍສາອາກອນ ຈະອອກໃບຢັ້ງຢືນການມອບພັນທະອາກອນ ໃຫ້ແກ່ຫົວໜ່ວຍທຸລະກິດ ທີ່ມອບພັນທະອາກອນຕາມປົກກະຕິ ໃນແຕ່ລະເດືອນ,ງວດ ແລະ ປີ ຕາມການເຄື່ອນໄຫວທຸລະກິດຕົວຈິງ ພາຍຫລັງທີ່ໄດ້ສະຫລຸບ ບັນຊີປະຈຳປີ ແລະ ມອບ.

ອາກອນທີ່ຍັງຄ້າງມອບ ຖືກຕ້ອງ, ຄົບຖ້ວນແລ້ວ ຈຶ່ງຈະອອກໃບຢັ້ງຢືນການມອບພັນທະອາກອນ ໃຫ້ແກ່ຫົວໜ່ວຍທຸລະກິດນັ້ນ ເປັນແຕ່ລະປີ ເພື່ອຢັ້ງຢືນການປະຕິບັດພັນທະໃນປີຜ່ານມາ ແລະ ສາມາດເຄື່ອນໄຫວທຸລະກິດໃນປີຕໍ່ໄປ.

ສະນັ້ນ, ເພື່ອຄຸ້ມຄອງການເຄື່ອນໄຫວຂອງຫົວໜ່ວຍທຸລະກິດ ໃຫ້ຖືກຕ້ອງຕາມລະບຽບກົດໝາຍກຳນົດໄວ້, ຮັບປະກັນໃນການປະຕິບັດພັນທະຂອງຕົນຢ່າງເປັນປົກກະຕິ ແລະ ຖືກຕ້ອງຕາມການເຄື່ອນໄຫວທຸລະກິດ ຕົວຈິງ; ໃຫ້ທຸກຂະແໜງການ, ຫົວໜ່ວຍທຸລະກິດ, ບຸກຄົນ ທີ່ຄຸ້ມຄອງຫົວໜ່ວຍທຸລະກິດດັ່ງກ່າວ ຫລື ມີການຕິດຕໍ່ພົວພັນໃນການດຳເນີນທຸລະກິດ ຈົ່ງຕິດຕາມ, ກວດກາ ແລະ ແນະນຳ ທຸກຫົວໜ່ວຍທຸລະກິດຕ້ອງໃຫ້ມີໃບຢັ້ງຢືນການມອບພັນທະອາກອນປະຈຳປີ ເພື່ອນຳໃຊ້ແທນໃບທະບຽນອາກອນ ຄັດຕິດມາພ້ອມທຸກຄັ້ງ ຈຶ່ງພິຈາລະນາອະນຸຍາດຕ່າງໆ ເຊັ່ນ :

1. ການນຳເຂົ້າ ຫລື ສົ່ງອອກ ສິນຄ້າ ແລະ ການບໍລິການ ;
2. ການເຄື່ອນຍ້າຍສິນຄ້າຢູ່ພາຍໃນປະເທດ ;
3. ການອະນຸຍາດ ໃຫ້ຂະຫຍາຍ ຫລື ຕໍ່ອາຍຸຂອງການລົງທຶນ, ຕໍ່ອາຍຸການສຳປະທານ ຫລື ຕໍ່ອາຍຸການດຳເນີນທຸລະກິດ;
4. ການປະມູນ ການຊື້-ຂາຍ ສິນຄ້າ ແລະ ການບໍລິການ ຫລື ການປະມູນໂຄງການຕ່າງໆ ເຊັ່ນ: ໂຄງການກໍ່ສ້າງ, ສ້ອມແປງ ແລະ ບໍລິການອື່ນໆ ກັບອົງການຈັດຕັ້ງຂອງລັດ, ເອກະຊົນ, ອົງການຈັດຕັ້ງສາກົນ ຫລື ກັບຫົວໜ່ວຍທຸລະກິດດ້ວຍກັນ;
5. ການຂໍຕໍ່ວີຊາ ຫລື ຂໍອະນຸຍາດພັກເຊົາ ຢູ່ ສປປ ລາວ ຂອງຜູ້ດຳເນີນທຸລະກິດ;
6. ການສະເໜີ ຂໍນະໂຍບາຍ ຫລື ແກ້ໄຂວຽກງານພາຍໃນວິສາຫະກິດ ຕໍ່ຂະແໜງການຂອງລັດ;
7. ການຂໍຖອນເງິນງົບປະມານ ຜ່ານລະບົບຄັງເງິນແຫ່ງຊາດ ;
8. ການກວດກາບັນຊີວິສາຫະກິດປະຈຳປີ ລວມທັງການສະເໜີຂໍໃບຢັ້ງຢືນການມອບພັນທະອາກອນໃນແຕ່ລະປີ;
9. ການສະເໜີຂໍຫັກ, ຂໍເງິນອາກອນຄືນ ແລະ ຂໍນະໂຍບາຍຫລຸດຜ່ອນ ຫລື ຂໍຍົກເວັ້ນອາກອນ .

ເມື່ອທ່ານໄດ້ຮັບແຈ້ງການສະບັບນີ້ແລ້ວ ຈົ່ງຊ່ວຍຕິດຕາມ, ກວດກາ, ແນະນຳ ໃຫ້ຫົວໜ່ວຍທຸລະກິດສະຫລຸບບັນຊີປະຈຳປີໃຫ້ຖືກຕ້ອງ, ມອບພັນທະອາກອນໃຫ້ຄົບຖ້ວນ, ສະເໜີຂໍໃບຢັ້ງຢືນການມອບພັນທະອາກອນປະຈຳປີ ຂອງປີຜ່ານມາ ເພື່ອຈະສືບຕໍ່ເຄື່ອນໄຫວທຸລະກິດຕໍ່ໄປ ໃຫ້ຖືກຕ້ອງຕາມລະບຽບກົດໝາຍກຳນົດໄວ້.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດ ແຈ້ງການສະບັບນີ້ ໃຫ້ໄດ້ຮັບຜົນດີ.

ຮມ ຫົວໜ້າຫ້ອງການກະຊວງການເງິນ

ກະຊວງການເງິນ ຫ້ອງການ

ສີແພງ ພົນອາມາດ